# ທັກສະການຄຸ້ມຄອງຂອງຜູ້ອຳນວຍການໂຮງຮຽນອະນຸບານສັງກັດລັດ ໃນ ແຂວງ ສາລະວັນ

*ຄຳຄ່ອງ ຈັນທະວົງສັກ[1], ສົມໄຊ ເທບສົມບັດ[2], ລັດດາພອນ ພະໄຊສິດທະເດດ[3], ສອນເພັດ ສີສຸລາດ[4]*
*ສາຂາວິຊາວິທະຍາສາດການສຶກສາ ຄະນະສຶກສາສາດມະຫາວິທະຍາໄລ ຈຳປາສັກ*

## ບົດຄັດຫຍໍ້

ການສຶກສາຄັ້ງນີ້ແມ່ນການສຶກສາໃນຫົວຂໍ້ 'ທັກສະການຄຸ້ມຄອງຂອງຜູ້ອຳນວຍການໃນໂຮງຮຽນອະນຸບານຂອງລັດ ພາຍໃນແຂວງ ສາລະວັນ' ເຊິ່ງມີຈຸດປະສົງ(1) ເພື່ອສຶກສາທັກສະໃນການບໍລິຫານຂອງຜູ້ອຳນວຍການໂຮງຮຽນອະນຸບານສຶກສາສັງກັດລັດ ໃນແຂວງ ສາລະວັນ (2) ເພື່ອປຽບທຽບທັກສະຂອງຜູ້ບໍລິຫານໂຮງຮຽນອະນຸບານສຶກສາທີ່ສັງກັດພະແນກສຶກສາທິການ ແລະ ກິລາແຂວງສາລະວັນ ໂດຍຈຳແນກຕາມເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກ. ໃນການຄົ້ນຄວ້າຄັ້ງນີ້ຜູ້ຄົ້ນຄວ້າໄດ້ດຳເນີນການສຶກສາແບບສຳຫຼວດ (Survey Reaserch) ເປັນການສຳຫຼວດແນວຄິດຂອງຜູ້ບໍລິຫານໂຮງຮຽນ ແລະ ຄູສອນຈາກບັນດາໂຮງຮຽນອະນຸບານສັງກັດລັດ ພາຍໃນແຂວງ ສາລະວັນ. ກຸ່ມຕົວຢ່າງໃນການສຶກສາຄັ້ງນີ້ແມ່ນມີຈຳນວນ 226 ຄົນ ໂດຍໃຊ້ວິທີກຳນົດກຸ່ມຕົວຢ່າງແບບແບ່ງອັດຕາສ່ວນ (Quota random sampling) ໂດຍເລືອກເອົາໂຮງຮຽນອະນຸບານຕົວເມືອງລະ 1 ແຫ່ງ ທົ່ວແຂວງ ສາລະວັນ, ຈາກນັ້ນຈຶ່ງຄຳນວນກຸ່ມຕົວຢ່າງຕາມສູດ ຂອງ ທາໂຣ ຢາມາເນ Taro Yamane. ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ເປັນແບບສອບຖາມ ເຊິ່ງຂັ້ນຕອນການພັດທະນາເຄື່ອງມືແມ່ນໄດ້ຜ່ານການກວດສອບຄ່າຄວາມຖືກຕ້ອງ IOC ແລະ ຄ່າຄວາມເຊື່ອໝັ້ນ Cronbach Alpha ໂດຍທົດລອງກັບກຸ່ມຕົວຢ່າງ 30 ຄົນ ເຊິ່ງຜົນອະເຄາະໂດຍລວມແມ່ນລະດັບສູງກວ່າ 0.7 ແລະ ສະຖິຕິທີ່ໃຊ້ເຂົ້າໃນການວິເຄາະຂໍ້ມູນປະກອບມີ ຄ່າຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage), ຄ່າສະເລ່ຍ (Mean ), ຄ່າຜັນປ່ຽນມາດຕະຖານ (SD.), t- test ແລະ f-test) ການໃຊ້ໂປຣແກຣມສຳເລັດຮູບ Microsoft excel and SPSS.

ຜົນການວິເຄາະພົບວ່າ: ກຸ່ມຕົວຢ່າງແມ່ນມີຄວາມຄິດເຫັນຕໍ່ທັກສະການບໍລິຫານ 5 ດ້ານ ຂອງຜູ້ອຳນວຍການໂຮງຮຽນອະນຸບານ ພາຍໃນ ແຂວງ ສາລະວັນ ແມ່ນຢູ່ໃນລະດັບດີຫຼາຍ ແຕ່ຍັງມີບາງຕົວຊີ້ວັດໃນຈຳນວນ 5 ດ້ານແມ່ນຢູ່ໃນລະດັບຄວາມຄິດເຫັນລະດັບປານກາງ. ສຳລັບການປຽບທຽບທັກສະການບໍລິຫານທີ່ຈຳແນກຕາມເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກ; ຈາກຜົນການວິເຄາະປຽບທຽບບັນດາທັກສະການບໍລິຫານດ້ານຕ່າງໆ ໂດຍການຈຳແນກຕາມ 3 ລັກສະນະດັ່ງກ່າວພົບວ່າ: ແມ່ນມີຄວາມຄິດເຫັນບໍ່ແຕກຕ່າງກັນຢ່າງມີໄລຍະສຳຄັນທາງສະຖິຕິ ຢູ່ໃນລະດັບ 0.05 ໃນທັງໝົດ 5 ດ້ານຄື: ທັກສະດ້ານຄວາມຮູ້-ຄວາມສາມາດ, ທັກສະດ້ານເຕັກນິກ, ທັດສະດ້ານການສຶກສາການສອນ, ທັກສະດ້ານມະນຸດສຳພັນ ແລະ ທັກສະດ້ານການມະໂນພາບ; ໝາຍຄວາມວ່າ ຄວາມຄິດເຫັນຂອງຜູ້ອຳນວຍການ

---

[1] *ນັກສຶກສາປະລິນຍາໂທ ສາຂາວິຊາວິທະຍາສາດການສຶກສາ ຄະນະສຶກສາສາດມະຫາວິທະຍາໄລ ຈຳປາສັກ*

[2] *ວິທະຍາໄລຄູປາກເຊ*

[3] *ຄະນະສຶກສາສາດມະຫາວິທະຍາໄລ ຈຳປາສັກ*

[4] *ຄະນະສຶກສາສາດມະຫາວິທະຍາໄລ ຈຳປາສັກ*

ແລະ ຄູສອນໃນບັນດາໂຮງຮຽນອະນຸບານສັງກັດລັດ ພາຍໃນແຂວງ ສາລະວັນ ແມ່ນມີຄວາມຄິດເຫັນໄປໃນທິດທາງດຽວກັນ ທາງດ້ານເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກທີ່ແຕກຕ່າງກັນ.

**ຄໍາສັບສໍາຄັນ:** ການຄຸ້ມຄອງ ,ການຄຸ້ມຄອງການສຶກສາ ,ການຄຸ້ມຄອງໂຮງຮຽນ, ທັກສະ, ທັກສະການຄຸ້ມຄອງ, ຜູ້ອໍານວຍການໂຮງຮຽນ, ຄູ , ໂຮງຮຽນອະນຸບານ,ໂຮງຮຽນອະນຸບານສັງກັດພະແນກສຶກສາທິການ ແລະ ກິລາແຂວງ, ທັກສະຄວາມຮູ້-ຄວາມຄິດ,ທັກສະດ້ານເຕັກນິກ ,ທັກສະດ້ານການສຶກສາ ແລະ ການສອນ ,ທັກສະດ້ານມະນຸດສໍາພັນ, ທັກສະດ້ານວິໄສທັດ

# The Managerial Skills of Principals at State Kindergarten Schools in Salavan Proince


## Abstract

The Application of Information Communication Technology ( ICT) on Learning and Teaching Implementation at college of health sicences champasak. The three objectives are: to study the use of information technology by teachers and students at Champasak College of Health Sciences, to compare the use of information technology by teachers and students according to gender, age, experience, class and field of study and to study the views of teachers and students on the use of technology for quality and better development in the future, which is a quantitative study The population used in this study were teachers and students of the College of Health Sciences, a total of 400 people with a sample size of 196 people. which is divided into 50 teachers and 146 students. The tool used in this study is a questionnaire. Statistics for this study include: (Frequency), (Percentage), Mean ($\bar{X}$ ) and $SD$). For reference statistics are used ($T$-test Independent) ແລະ ($F$-test) From this study found that:

Information technology usage conditions; In terms of ICT equipment, tools and online social media, there is a level of use of "much use" for the opinion on the condition of ability, goal of use and response to the information technology system is in the opinion level of "very agree" but there is still an average result in the middle level: teachers and students still have limited skills in using video and audio editing programs well, Microsoft Operating System, problems with high internet costs or slow signal, non-standard and insufficient technology equipment, lack of knowledge, understanding and expertise in the use of information technology.

The results of the comparison between the opinions of the teachers at the university found that: the opinions between men and women, work experience and educational qualifications of teachers regarding the use of information technology in all 7 aspects are not statistically significant, But the tools and online media and the ability and purpose of using ICT are statistically significant, For the comparison of students' opinion by sex, discrimination by school year and discrimination by field of study regarding the use of information technology in all 7 aspects, there is no level of statistical significance.

The results of the analysis of the views of teachers and students on the use of information technology in teaching and learning, which are at the opinion level of 'very agree to very agree'; For example, the institution should raise the role of using technology to promote public awareness in order to raise the role of teachers and students to have access to high-speed internet, promote

and develop knowledge for students to use diverse and appropriate technologies, should develop knowledge and skills in the use of technology for teachers to be deeper and targeted and develop the technology system into the administrative work system to be more modern and appropriate.

**Keywords:** The Application of Information Communication Technology (ICT), Learning and Teaching Implementation, college of health sciences champasak

**1. ພາກສະເໜີ**

ໃນຍຸກສະຕະວັດທີ 21 ການຄຸ້ມຄອງຫານສຶກສາຈຳເປັນຕ້ອງມີທັກສະ ແລະ ມີປະສິດທິພາບ ເນື່ອງຈາກວ່າຮູບແບບການຄຸ້ມຄອງການສຶກສແບບດັ້ງເດີມທີ່ເນັ້ນການສອນຈາກອາຈານ ດັ່ງນັ້ນ, ການປະຕິຮູບການຄຸ້ມຄອງການຮຽນຮູ້ເປັນບັນຫາສຳຄັນຂອງທຸກຂະແໜງການ ມັນເປັນສິ່ງຈຳເປັນທີ່ຈະປະຕິບັດການປະຕິຮູບຢ່າງມີປະສິດທິຜົນ ການຮຽນຮູ້ສາມາດປະສົບຜົນສຳເລັດໄດ້ພຽງແຕ່ນຂະບວນການຄຸ້ມຄອງທີ່ມີປະສິດທິພາບ, ກຽມພ້ອມຮັບມືກັບສິ່ງທ້າທາຍຂອງການປ່ຽນແປງ. ສະນັ້ນ ການສຶກສາຈຶ່ງເປັນເຄື່ອງມືໃນການພັດທະນາຄົນໃຫ້ມີຄຸນນະພາບ ທ່າແຮງທີ່ມີຢູ່ໃນບຸກຄົນໄດ້ຮັບການພັດທະນາຢ່າງເຕັມທີ່ ສາມາດດຳລົງຊີວິດຢ່າງມີຄວາມສຸກ, ສິ່ງເຫຼົ່ານີ້ຈະເກີດຂຶ້ນໄດ້ນັ້ນມັນຕ້ອງເກີດຂຶ້ນຈາກການມີສ່ວນຮ່ວມຂອງຄູ, ຊຸມຊົນ, ແລະ ຜູ້ອຳນວຍການການສຶກສາ ເພາະວ່າຜູ້ອຳນວຍການໂຮງຮຽນເປັນບຸກຄົນທີ່ສຳຄັນທີ່ຈະກຳນົດທິດທາງ ແລະ ກຳນົດເປົ້າໝາຍການພັດທະນາການສຶກສາ (ນະລິນີ ທະວີສິນ, 2012:37).

ການສຶກສາ ແມ່ນຂະບວນວິວັດແຫ່ງການຮຽນການສອນທາງດ້ານວິທະຍາສາດ ໄດ້ແກ່ວິທະຍາ ສາດທຳມະຊາດ, ສັງຄົມ ແລະ ການຄົ້ນຄວ້າດ້ານທິດສະດີ, ພຶດຕິກຳ ເພື່ອສ້າງຄົນໃຫ້ມີການຂະຫຍາຍຕົວຮອບດ້ານ, ມີຄຸນສົມບັດສົນທຳປະຕິບັດ, ມີຄວາມຮູ້ຄວາມສາມາດ, ມີວິຊາຊີບ, ມີສຸຂະພາບພະລານາໄມ, ມີຄວາມສີວິໄລທາງດ້ານຈິດໃຈ, ມີສິລະປະ, ມີລະບຽບວິໄນ, ມີນ້ຳໃຈຮັກປະເທດຊາດ ຮັກລະບອບປະຊາທິປະໄຕ ປະຊາຊົນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ (ກົດໝາຍການສຶກສາ,2007, ໜ້າ 1).

ວຽກງານການສຶກສາເປັນວຽກງານໃຈກາງ ໃນການພັດທະນາຊັບພະຍາກອນມະນຸດ, ຖືສຳຄັນການພັດທະນາຄົນທາງດ້ານຄຸນສົມບັດສົນທຳປະຕິບັດ, ຊີວະທັດ ແລະ ໂລກະທັດ, ວິທະຍາສາດ ແລະ ກ້າວໜ້າ ກໍຄືສ້າງຄົນໃຫ້ມີຄວາມຮູ້ຄວາມສາມາດ, ຮູ້ຄົ້ນຄິດ, ມີວິຊາຊີບ, ສ້າງສັງຄົມໃຫ້ເປັນສັງຄົມແຫ່ງການຮຽນຮູ້, ເສດຖະກິດແຫ່ງພູມປັນຍາ ເທື່ອລະກ້າວ, ເອົາໃຈໃສ່ຂະຫຍາຍການສຶກສາກ່ອນໄວຮຽນ ແລະ ສູ້ຊົນປະຕິບັດການສຶກສາໃຫ້ມີຜົນສຳເລັດ, ເພີ່ມທະວີລົງທຶນໃສ່ວຽກງານການສຶກສາ ແລະ ຖືເປັນບູລິມະສິດແຫ່ງການໃຊ້ຈ່າຍງົບປະມານແຫ່ງລັດ, ຕັ້ງໜ້າພັດທະນາການສຶກສາແຫ່ງຊາດໃຫ້ມີຄຸນນະພາບ, ສ້າງໂອກາດໃຫ້ປະຊາຊົນເຂົ້າເຖິງການສຶກສາຢ່າງທົ່ວເຖິງ ໂດຍສະເພາະປະຊາຊົນເຂດຫ່າງໄກຊອກຫຼີກ, ແມ່ຍິງ, ເດັກນ້ອຍ ແລະ ຜູ້ດ້ອຍໂອກາດ (ກົດໝາຍການສຶກສາ,2007, ໜ້າ

**2. ຄຳຖາມຄົ້ນຄວ້າ.**

1. ທັກສະໃນການຄຸ້ມຄອງໂຮງຮຽນຂອງຜູ້ອຳນວຍການໂຮງຮຽນອະນຸບານສຶກສາ ສັງກັດລັດ ໃນແຂວງສາລະວັນ ເປັນຄືແນວໃດແດ່?
2. ຜູ້ອຳນວຍການໂຮງຮຽນທີ່ມີເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກແຕກຕ່າງກັນມີທັກສະໃນການຄຸ້ມຄອງໂຮງຮຽນຄືແນວໃດ?

**3. ຈຸດປະສົງຂອງການວິໄຈ**

1. ເພື່ອສຶກສາທັກສະໃນການຄຸ້ມຄອງຂອງຜູ້ອຳນວຍການໂຮງຮຽນອະນຸບານສຶກສາສັງກັດລັດ ພາຍໃນແຂວງ ສາລະວັນ.
2. ເພື່ອປຽບທຽບທັກສະຂອງຜູ້ອຳນວຍການໂຮງຮຽນອະນຸບານສຶກສາ ທີ່ສັງກັດພະແນກສຶກສາທິການ ແລະ ກິລາແຂວງສາລະວັນ ໂດຍຈຳແນກຕາມເພດ ,ວຸດທິການສຶກສາ ແລະ ປະສົບການເຮັດວຽກ.

**4. ວິທີການຄົ້ນຄວ້າ**

ການຄົ້ນຄວ້າຄັ້ງນີ້ເປັນການຄົ້ນຄວ້າກ່ຽວກັບສຶກສາທັກສະການຄຸ້ມຄອງໂຮງຮຽນຂອງຜູ້ອໍານວຍການໂຮງຮຽນອະນຸບານສຶກທີ່ສັງກັດພະແນກສຶກສາທິການແລະກິລາແຂວງສາລະວັນ, ຜູ້ຄົ້ນຄວ້າໄດ້ສຶກສາແນວຄິດ , ທິດສະດີ ແລະ ບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງ, ກໍານົດຂອບເຂດແນວຄິດ ແລະ ນິຍາມສັບໃຊ້ໃນທາງປະຕິບັດ ເຊິ່ງສາມາດນໍາສະເໜີຕາມລໍາດັບເພື່ອປະກອບການຄົ້ນຄ້ວາ

**ກຸ່ມຕົວຢ່າງ:**

ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າແມ່ນຜູ້ອໍານວຍການ ແລະ ຄູສອນ ທໍາອິດແມ່ນໃຊ້ວິທີກໍານົດກຸ່ມຕົວຢ່າງແບບແບ່ງນໍານົດອັດຕາສ່ວນ (Quota Sampling Technique) ໂດຍເລືອກເອົາໂຮງຮຽນອະນຸບານ ເມືອງລະ 1 ແຫ່ງ ທົ່ວແຂວງ ສາລະວັນ, ຈາກນັ້ນຈຶ່ງຄໍານວນກຸ່ມຕົວຢ່າງຕາມສູດ ຂອງ ທາໂຣ ຢາມາເນ Taro Yamane (1987) ສາມາດເລືອກໄດ້ຈໍານວນກຸ່ມຕົວຢ່າງທັງໝົດ 226 ຄົນດັ່ງວິທີການຄໍານວນລຸ່ມນີ້:

ການຄໍານວນກຸ່ມຕົວຢ່າງຕາມສູດ ຂອງ ທາໂຣ ຢາມາເນ Taro Yamane ແລະ ໃຊ້ຄວາມຄາດເຄື່ອນ 0,05.

$$n = \frac{N}{1+Ne^2}$$

$n$ ແມ່ນກຸ່ມຕົວຢ່າງຂອງຄູ

$N$ ແມ່ນປະຊາກອນຄູ

$e$ ແມ່ນຄ່າຄວາມຄາດເຄື່ອນ

$$n = \frac{521}{1 + 521(0.05^2)} = 226$$

**ພັດທະນາເຄື່ອງມື**

ເຄື່ອງມືທີ່ໃຊ້ໃນການສຶກສາຄົ້ນຄ້ວາເປັນແບບສອບຖາມ (Questionnaire) ເພື່ອສອບຖາມຂໍ້ມູນກ່ຽວກັບທັກສະໃນການຄຸ້ມຄອງໂຮງຮຽນອະນຸບານທີ່ສັງກັດພະແນກສຶກສາທິການແລະກິລາ ແຂວງ ສາລະວັນ ໂດຍປະກອບດ້ວຍ 2 ສ່ວນຄື:

**ຕອນທີ1:** ແບບສອບຖາມກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ເປັນລັກສະນະລາຍການ (Check List)ປະກອບດ້ວຍ ເພດ ແລະ ວຸດທິການສຶກສາເພື່ອຫາຄ່າຄວາມຖີ່ ແລະ ຄ່າສ່ວນຮ້ອຍ.

**ຕອນທີ2:** ແບບສອບຖາມກ່ຽວກັບທັກສະໃນການຄຸ້ມຄອງໂຮງຮຽນ ຂອງຜູ້ອໍານວຍການໂຮງຮຽນອະນຸບານທີ່ສັງກັດພະແນກສຶກສາທິການແລະກິລາແຂວງສາລະວັນ ໃນຈໍານວນ 5 ດ້ານຄື:

- ທັກສະດ້ານຄວາມຮູ້-ຄວາມຄິດ
- ທັກສະດ້ານເຕັກນິກ
- ທັກສະດ້ານການສຶກສາ-ການສອນ
- ທັກສະດ້ານມະນຸດສໍາພັນ
- ທັກສະດ້ານວິໃສທັດ

ເປັນແບບມາດຕາສ່ວນປະມານຄ່າ (Rating Scale)5 ລະດັບຄື: ຫຼາຍທີ່ສຸດ, ຫຼາຍ, ປານກາງ, ໜ້ອຍ, ໜ້ອຍທີ່ສຸດ. (ບຸນຊົມ ສີສະອາດ, 2535:100) ເຊິ່ງໃຫ້ຄ່ານໍ້າໜັກຄະແນນດັ່ງນີ້:

5 ໝາຍເຖິງ ມີທັກສະໃນການຄຸ້ມຄອງໂຮງຮຽນ ຢູ່ໃນລະດັບດີຫຼາຍສຸດ

4 ໝາຍເຖິງ ມີທັກສະໃນການຄຸ້ມຄອງໂຮງຮຽນ ຢູ່ໃນລະດັບດີຫຼາຍ

3 ໝາຍເຖິງມີທັກສະໃນການຄຸ້ມຄອງໂຮງຮຽນ ຢູ່ໃນລະດັບປານກາງ

2 ໝາຍເຖິງ ມີທັກສະໃນການຄຸ້ມຄອງໂຮງຮຽນ ໃນລະດັບດີໜ້ອຍ

1 ໝາຍເຖິງມີທັກສະໃນການຄຸ້ມຄອງໂຮງຮຽນ ຢູ່ໃນລະດັບໜ້ອຍທີ່ສຸດ

**5. ການວິເຄາະຂໍ້ມູນ**

ໃນການຄົ້ນຄວ້າຄັ້ງນີ້ ຜູ້ຄົ້ນຄວ້ານຳໃຊ້ໂປແກຣມຄອມພິວເຕີສຳເລັດຮູບໃນການວິເຄາະແລະປະເມີນຜົນຂໍ້ມູນທາງສະຖິຕິຊຶ່ງມີຂັ້ນຕອນດັ່ງນີ້:

ຕອນທີ1: ວິເຄາະຂໍ້ມູນ ກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມໂດຍການຫາຄ່າຄວາມຖີ່ (Frequency)ແລະ ຫາຄ່າສ່ວນຮ້ອຍ (Percentage).

ຕອນທີ2: ວິເຄາະຂໍ້ມູນ ກ່ຽວກັບທັກສະໃນການຄຸ້ມຄອງໂຮງຮຽນຂອງຜູອຳນວຍການໂຮງຮຽນອະນຸບານທີ່ສັງກັດພະແນກສຶກສາທິການແລະກິລາແຂວງສາລະວັນໂດຍການຫາຄ່າສະເລ່ຍ$\bar{X}$ ແລະ ຄ່າຜົນປ່ຽນມາດຕະຖານ(SD)ໂດຍສະເໜີເປັນຕາຕະລາງປະກອບຄຳບັນຍາຍ.

ຕອນທີ3: ປຽບທຽບທັກສະໃນການຄຸ້ມຄອງໂຮງຮຽນຂອງຜູອຳນວຍການໂຮງຮຽນອະນຸບານທີ່ສັງກັດພະແນກສຶກສາທິການແລະກິລາແຂວງສາລະວັນໂດຍຈຳແນກຕາມເພດດ້ວຍການນຳໃຊ້ t-test ພິສູດສົມມຸດຕິຖານທີ $H_1$ ແລະ ປຽບທຽບທັກສະໃນການຄຸ້ມຄອງໂຮງຮຽນຂອງຜູອຳນວຍການໂຮງຮຽນອະນຸບານທີ່ສັງກັດພະແນກສຶກສາທິການແລະກິລາແຂວງສາລະວັນໂດຍວຸດທິການສຶກສາດ້ວຍ f-test ເພື່ອພິສູດສົມມຸດຕິຖານ $H_2$ ແລະ $H_3$.**ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ**

(1) ຄ່າຄວາມຖີ່ (Frequency)

(2) ຄ່າສ່ວນຮ້ອຍ (Percentage)

(3) ຄ່າສະເລ່ຍ $\bar{X}$

(4) ຄ່າຜົນປ່ຽນມາດຕະຖານ (SD)

(5) t-test (ໃຊ້ປຽບທຽບດ້ານເພດຂອງກຸ່ມຕົວຢ່າງ)

(6) F-test (ໃຊ້ປຽບທຽບດ້ານວຸດທິການສຶກສາ ແລະ ປະສົບການເຮັດວຽກ)

6. ຜົນໄດ້ຮັບ ພາຍຫຼັງສຳເລັດການສຶກສາໃນຫົວຂໍ້ສຶກສາທັກສະການຄຸ້ມຄອງຂອງຜູ້ອຳນວຍການໂຮງຮຽນອະນຸ ບານສັງກັດລັດໃນແຂວງສາລະວັນໃນຄັ້ງນີ້ຈະໄດ້ຮູ້ລະດັບທັກສະການຄຸ້ມຄອງຂອງຜູ້ອຳນວຍການໂຮງຮຽນອະນຸບານ ແລະ ຄວາມຕ້ອງການພັດທະນາທັກສະການຄຸ້ມຄອງໂຮງຮຽນຂອງຜູ້ອຳນວຍການໂຮງຮຽນອະນຸບານ.

- ເປັນຂໍ້ມູນນີ້ສາມາດເປັນບ່ອນອີງໃນການກຳນົດແນວທາງໃນການປັບປຸງວຽກງານການຄຸ້ມຄອງຄຸ້ມຄອງໂຮງຮຽນຂອງຜູ້ອຳນວຍການໂຮງຮຽນອະນຸບານພາຍ ໃນແຂວງ ສາລະວັນ.
- ເປັນຂໍ້ມູນໃຫ້ແກ່ຜູ້ບໍລິຫານສຶກສາທີ່ກ່ຽວຂ້ອງນຳເອົາໄປເປັນແນວທາງໃນການພັດທະນາຜູ້ບໍລິຫານການສຶກສາ ໃຫ້ໄດ້ຮັບການປັບປຸງດີຂຶ້ນໃນອານາຄົດ.
- ເປັນຂໍ້ມູນອ້າງອີງໃຫ້ແກ່ນັກວິຊາການ ແລະ ນັກຄົ້ນຄວ້າໄດ້ຮັບຮູ້ຂໍ້ມູນເປັນບ່ອນອີງໃຫ້ແກ່ການຄົ້ນຄວ້າໃນຕໍ່ໜ້າ.

7. ວິພາກຜົນ (Discussion)

ລະບົບການຄຸ້ມຄອງ ແມ່ນເປັນກົງຈັກທີ່ສຳຄັນຂອງຈັດຕັ້ງໃດໜຶ່ງ ແລະ ມີໂຄງສ້າງສະເພາະທີ່ເປັນຂະບວນການຢ່າງເປັນລະບົບ,ລະບຽບ ແລະ ມີພາສາບົດບາດ, ໜ້າທີ່ ທັງມີເປົ້າໝາຍທີ່ຊັດເຈນ. ການການລະບົບການຄຸ້ມຄອງທີ່ດີ ແລະ ມີຄຸນນະພາບນັ້ນ ແມ່ນມີຜົນໂດຍກົງຕໍ່ກັບການຂັບເຄື່ອນອົງກອນ ໃຫ້ມີການພັດທະນາ ແລະ ບັນລຸເປົ້າໝາຍທີ່ວາງໄວ້ຢ່າງມີຄຸນນະພາບສູງ. ສະນັ້ນ, ການມີຜູ້ອຳນວຍການທີ່ມີຄຸນນະພາບ ແລະ ມີທັກສະທີ່ດີນັ້ນ ມັນສະແດງອອກທາງດ້ານພຶດຕິກຳ ຫຼື ປະຕິບັດວຽກງານຢ່າງຖືກຕ້ອງ, ມີຄວາມຊ່ຽວຊານ ເຊິ່ງຈະຊ່ວຍເຮັດໃຫ້ການຄຸ້ມຄອງວຽກງານມີປະສິດທິພາບ. ຜູ້ອຳນວຍການທີ່ດີແມ່ນ

ຜູ້ອຳນວຍການທີ່ສາມາດບໍລິຫານວຽກງານຢ່າງມີຄຸນນະພາບ ແລະ ນຳພາອົງການຈັດຕັ້ງທີ່ຕົນສັງກັດໄປສູ່ຜົນສຳເລັດ ເຊິ່ງເປັນຂະບວນການເຮັດວຽກຮ່ວມກັນກັບຄົນອື່ນ ຫຼື ຄົນອື່ນຢ່າງຄ່ອງແຄ້ວ,ຖືກຕ້ອງແມ້ນຢຳ ແລະ ມີຄວາມຊຳນິຊຳນານ ເພື່ອຜົນສຳເລັດຂອງວຽກງານຕາມເປົ້າໝາຍທີ່ກຳນົດໄວ້. (ພະຍອມ ວົງສາສີ, 2009:64) ແລະ (Newman,1963: 5).

ສຳລັບທັກສະການຄຸ້ມຄອງງານຂອງຄະນະຜູ້ອຳນວຍການໂຮງຮຽນອະນຸບານສັງກັດລັດ ໃນບັນດາເມືອງຕ່າງໆ ພາຍໃນແຂວງ ສາລະວັນ ແມ່ນລົງເລິກສຶກສາ ດ້ານທັກດ້ານຕ່າງໆເຊັ່ນ: ທັກສະດ້ານຄວາມຮູ້ ແລະ ຄວາມສາມາດ, ທັກສະດ້ານເຕັກນິກວິທີການ, ທັກສະດ້ານການສຶກສາການສອນ, ທັກສະດ້ານມະນຸດສຳພັນ ແລະ ທັກສະດ້ານຈິຕະນາການ. ຜົນການວິເຄາະຈາກການສຶກສາຄວາມຄິດເຫັນຂອງຄະນະຜູ້ອຳນວຍ ແລະ ຄູສອນ ຈາກບັນດາໂຮງຮຽນອະນຸບານສັງກັດລັດ ພາຍໃນແຂວງ ສາລະວັນ ພົບວ່າ: ທັກສະການຄຸ້ມຄອງຂອງຜູ້ອນຳນວຍການ ໂດຍລວມແມ່ນຢູ່ໃນລະດັບຄວາມຄິດເຫັນ ລະດັບເຫັນດີ ໃນບັນດາ 5 ຕົວຊີ້ວັດດັ່ງກ່າວ; ໝາຍຄວາມວ່າ ຜູ້ອຳນວຍໂຮງຮຽນ ແມ່ນມີທັກສະການຄຸ້ມຄອງຢູ່ໃນລະດັບດີ ໃນດ້ານຕ່າງໆ ເຊັ່ນ: ເປັນຕົ້ນແມ່ນດ້ານຄວາມຮູ້,ຄວາມສາມາ, ດ້ານເຕັກນິກວິທີການ, ດ້ານການສຶກສາການສອນ, ດ້ານມະນຸດສຳພັນ ແລະ ດ້ານການຈິດຕະການ ເຊິ່ງຜົນການສຶກສາດັ່ງກ່າວມີຄວາມສອດຄ່ອງຫຼາຍດ້ານກັບຜົນການສຶກສາຂອງນັກຄົ້ນຄວ້າຫຼາຍໆທ່ານ ເປັນຕົ້ນແມ່ນ ສັນທະນາ ພູມມາ,(2014); ສຸພາພອນ ບຸນມາກ,(2017) ແລະ ສົມສັກ ຄົງທ່ຽງ, (2019).

ສຳລັບການປຽບທຽບຄວາມຄິດເຫັນຂອງຄະນະຜູ້ອຳນວຍການ ແລະ ຄູສອນ ໃນໂຮງຮຽນອະນຸບານສັງກັດລັດ ຕໍ່ທັກສະການຄຸ້ມຄອງຂອງຜູ້ອຳນວຍການທັງ 5 ດ້ານຄື: ທັກສະດ້ານຄວາມຮູ້ ແລະ ຄວາມສາມາດ, ທັກສະດ້ານເຕັກນິກວິທີການ, ທັກສະດ້ານການສຶກສາການສອນ, ທັກສະດ້ານມະນຸດສຳພັນ ແລະ ທັກສະດ້ານຈິຕະນາການ ໂດຍການຈຳແນກຕາມເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກ ໂດຍການວິເຄາະຫາຄ່າສະຖິຕິ t-test ແລະ f-test ເຊິ່ງຜົນການວິເຄາະດັ່ງກ່າວໄດ້ສະແດງໃຫ້ຢ່າງຊັດເຈນວ່າ ຄວາມຄິດເຫັນຂອງກຸ່ມຕົວທີ່ຈຳແນກຕາມ 3 ດ້ານດັ່ງກ່າວແມ່ນມີຄວາມຄິດເຫັນບໍ່ແຕກຕ່າງກັນຢ່າງບໍ່ມີໄລຍະສຳຄັນທາງສະຖິຕິ ໃນລະດັບ 0.05 ໃນທັງໝົດ 5 ດ້ານທັກສະການນບໍລິຫານ; ເຊິ່ງຜົນການຄົ້ນຄວ້ານີ້ສ່ວນໃຫຍ່ແລ້ວແມ່ນສອດຄ່ອງໃນບາງດ້ານຄື: ປະຄອງ ແສງຈຳໜ່າຍ ພ້ອມຄະນະ, (2019) ສຶກສາພົບວ່າ: ດ້ານເຕັກນິກ ແລະ ດ້ານມະນຸດສຳພັນ ຜູ້ອຳນວຍການມີທັກສະບໍລິຫານງານບໍ່ແຕກຕ່າງກັນ. ແຕ່ສ່ວນຫຼາຍແມ່ນມີຜົນການສຶກສາທີ່ບໍ່ສອດຄ່ອງກັນກັບຜົນການສຶກສາຜ່ານມາເຊັ່ນດຽວກັນກັບ ການສຶກສາຂອງ ປະຄອງ ແສງຈຳໜ່າຍ ພ້ອມຄະນະ, (2019) ແລະ ສຸພານີ ກົມກົວ, (2018), ຜູ້ອຳນວຍການທີ່ມີປະສົບການຕ່າງກັນແມ່ນມີທັກສະບໍລິຫານແຕກຕ່າງກັນຢ່າງມີໄລະຍະສຳພັນທາງສະຖິຕິໂດຍລວມແຕ່ລະດ້ານແຕກຕ່າງກັນ. ສະນັ້ນ,ຈາກຜົນການສຶກສາການປຽບທຽບຄວາມແຕກຕ່າງດັ່ງກ່າວ; ອາດເວົ້າໄດ້ວ່າ ກຸ່ມຕົວຢ່າງແມ່ນມີຄວາມຄິດເຫັນສອດຄ່ອງໃນທິດທາງດຽວກັນ ຕໍ່ກັບທັກສະດ້ານການຄຸ້ມຄອງຂອງຄະນະຜູ້ອຳນວຍການໂຮງຮຽນ ອະນຸບານສັງກັດລັດ ພາຍໃນແຂວງ ສາລະວັນຢ່າງຈະແຈ້ງ ແລະ ຖືວ່າເປັນການຄົ້ນຄວ້າໜ້າສົນໃຈສຶກສາ ແລະ ສາມາດພິຈາລະນານຳເອົາຂໍ້ມູນດັ່ງກ່າວມາເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດເຂົ້າໃນວຽກງານຂອງພາກສ່ວນທີ່ກ່ຽວຂ້ອງຕາມຂັ້ນຕອນຕໍ່ໄປ.

**8. ສະຫລຸບຜົນ**

ການສຶກສາຄັ້ງນີ້ແມ່ນການສຶກສາກ່ຽວກັບທັກສະການຄຸ້ມຄອງ ຂອງຜູ້ອຳນວຍການໃນບັນດາໂຮງ ຮຽນ

ອະນຸບານຂອງລັດ ພາຍໃນແຂວງ ສາລະວັນ ເຊິ່ງມີຈຸດປະສົງ (1) ສຶກສາທັກສະໃນການຄຸ້ມຄອງຂອງຜູ້ອຳນວຍການໂຮງຮຽນອະນຸບານສຶກສາ ສັງກັດລັດໃນແຂວງສາລະວັນ (2) ເພື່ອປຽບທຽບທັກສະຂອງຜູ້ອຳນວຍການໂຮງຮຽນອະນຸບານສຶກສາທີ່ສັງກັດພະແນກສຶກສາທິການ ແລະກິລາແຂວງສາລະວັນ ໂດຍຈຳແນກຕາມເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກ. ໃນການຄົ້ນຄວ້າຄັ້ງນີ້ຜູ້ວິຄົ້ນຄວ້າໄດ້ດຳເນີນການວິໄຈແບບສຳຫຼວດ Survey Reaserch ເປັນການສຳຫຼວດແນວຄິດຂອງຜູ້ອຳນວຍການໂຮງຮຽນ ແລະ ຄູສອນຈາກບັນດາໂຮງຮຽນອະນຸບານສັງກັດລັດ ພາຍໃນແຂວງ ສາລະວັນ. ປະຊາກອນໃນການສຶກສາຄັ້ງນີ້ແມ່ນມີຈຳນວນ 226 ຄົນ ວິທີກຳນົດກຸ່ມຕົວຢ່າງແບບວິທີສະເພາະເຈາະຈົງ (Purposive random sampling) ໂດຍເລືອກເອົາໂຮງຮຽນອະນຸບານ ຕົວເມືອງລະ1 ແຫ່ງທົ່ວແຂວງ ສາລະວັນ. ເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ແມ່ນ ແບບສອບຖາມ ຕາມແບບຄຳຖາມເລືອກຕອບ ແລະ ແບບລະດັບຄວາມຄິດເຫັນ 5 ລະດັບ ເຊິ່ງຂັ້ນຕອນການພັດທະນາເຄື່ອງມືແມ່ນໄດ້ຜ່ານການກວດສອບຄ່າຄວາມຖືກຕ້ອງ IOC ແລະ ຄ່າຄວາມເຊື່ອໝັ້ນ Cronbach Alpha ໂດຍທົດລອງກັບກຸ່ມຕົວຢ່າງ 30 ຄົນ ແລະ ສະຖິຕິທີ່ໃຊ້ເຂົ້າໃນການວິເຄາະຂໍ້ມູນປະກອບມີ (1) ຄ່າຄວາມຖີ່ (Frequency), (2) ຄ່າສ່ວນຮ້ອຍ (Percentage), (3) ຄ່າສະເລ່ຍ ($\bar{\mathbf{X}}$), (4) ຄ່າຜັນປ່ຽນມາດຕະຖານ ($SD$), (5) t-test ແລະ (6) f-test) ການໃຊ້ໂປຣແກຣມສຳເລັດຮູບ Microsoft excel and SPSS version 2022.

ເພື່ອຕອບຄຳຖາມຄົ້ນຄວ້າທີ1; ຄືເພື່ອສຶກສາທັກສະການຄຸ້ມຄອງຂອງຜູ້ອຳນວຍການໂຮງຮຽນອະນຸບານສັງ ກັດລັດ ພາຍໃນແຂວງ ສາລະວັນ ເຊິ່ງສາມາດສະຫຼຸບໄດ້ວ່າ ຈາກການປະເມີນທັກສະການຄຸ້ມຄອງທັງໝົດ 5 ດ້ານແມ່ນພົບວ່າ: ຄວາມຄິດເຫັນສ່ວນໃຫຍ່ຂອງກຸ່ມຕົວຢ່າງ ແມ່ນມີລະດັບຄວາມຄິດເຫັນ ຢູ່ໃນລະດັບເຫັນດີ ຫາ ເຫັນດີຫຼາຍສຸດ ຕໍ່ທັກສະການຄຸ້ມຄອງໃນ 5 ດ້ານດັ່ງກ່າວ; ໝາຍຄວາມວ່າ ຜູ້ອຳນວຍການໂຮງຮຽນອະນຸບານສັງກັດລັດ ພາຍໃນ ແຂວງ ສາລະວັນ ແມ່ນມີທັກສະການຄຸ້ມຄອງຢູ່ໃນລະດັບດີພໍສົມຄວນ ແຕ່ເຖິງຢ່າງໃດກໍ່ຕາມ ຜົນການສຶກສາຍັງພົບອີກວ່າ ຍັງມີບາງຕົວຊີ້ວັດທີ່ຢູ່ໃນບັນດາທັກສະການຄຸ້ມຄອງດ້ານຕ່າງໆ ແມ່ນມີລະດັບຄວາມຄິດເຫັນ ເຫັນດີປານກາງ; ໝາຍຄວາມວ່າ ສ່ວນໃຫຍ່ແມ່ນຜູ້ອຳນວຍການໂຮງຮຽນອະນຸບານສັງກັດລັດ ແມ່ນຍັງມີບາງຕົວຊີ້ວັດທີ່ຕ້ອງການສືບຕໍ່ປັບປຸງ ແລະ ພັດທະນາໃຫ້ດີຂຶ້ນ ເພື່ອເຮັດໃຫ້ການຄຸ້ມຄອງໂຮງຮຽນມີຜົນສຳເລັດ ແລະ ມີການພັດທະນາຢ່າງຕໍ່ເນື່ອງ; ເປັນຕົ້ນແມ່ນ ຜູ້ອຳນວຍການຍັງມີຂີດຈຳກັດດ້ານແນວຄິດສ້າງສັນ ແລະ ພັດທະນາຜົນງານເພື່ອໃຫ້ເກີດປະໂຫຍດແກ່ໂຮງຮຽນຢ່າງຕໍ່ເນື່ອງ, ບັນຫາດັ່ງກ່າວອາດເກີດຈາກຍັງຂາດທັກສະການຄົ້ນຄິດ ແລະ ປະສົບການໃນການຄິດວິເຄາະ, ສັງເຄາະສະພາບ ແລະ ແນວທາງຕ່າງໆໃນການແກ້ໄຂບັນຫາ ທີ່ສາມາດນຳໄປສູ່ການພັດທະນາແບບຍືນຍົງ, ຍັງມີຂີດຈຳກັດດ້ານຄວາມຊຳນານງານໃນການດຳເນີນການສອນ, ມີພື້ນຖານຄວາມຮູ້, ຄວາມສາມາດໃນການນຳເອົາຄວາມຮູ້ໃໝ່ເຂົ້າໃນການສອນ, ມີຄວາມຮູ້ ແລະ ມີຄວາມເຂົ້າໃຈວິທີການຈັດການຮຽນ-ການສອນໃຫ້ມີປະສິດທິພາບ, ສາມາດເລືອກວິທີການສອນໃຫ້ແທດເໝາະກັບຜູ້ຮຽນ, ສາ ມາດເລືອກນຳໃຊ້ສື່ການຮຽນ-ການສອນໄດ້ຢ່າງມີປະສິດທິພາບ, ສາມາດຜະລິດສື່ການສອນຈາກສິ່ງທີ່ຫາໄດ້ໃນທ້ອງຖິ່ນ ແລະ ມີຄວາມສາມາດຈັດ ແລະ ສັບຊ້ອນຄູສອນໃນແຕ່ລະຂັ້ນໄດ້, ຂີດຈຳກັດທີ່ສາມາດນຳໃຊ້ເຄື່ອງມືທີ່ທັນສະໄໝເຊັ່ນ: ຄອມພິວເຕີ, ໂທລະສັບແອບເພື່ອການສຶກສາ ແລະ ສື່ອອນລາຍຕ່າງໆເຂົ້າໃນການປະຕິບັດວຽກງານ ແລະ ນຳໃຊ້ວິທີການໃໝ່ໆເຂົ້າໃນການພັດທະນາວຽກງານທີ່ຕົນຮັບຜິດຊອບ. ຄະ ນະ

ຜູ້ອຳນວຍການຍັງຫາດທັກສະທາງມະນຸດສຳພັນບບາງດ້ານຄື ການສະແດງຄວາມຮັກແພງ, ການມີຄວາມເຫັນອົກເຫັນໃຈຄົນອື່ນ, ມີການວາງຕົວທີ່ເໝາະສົມ, ບໍ່ສ້າງຄວາມກົດດັນແກ່ຄົນອື່ນ, ມີວິທີການຕຳນິ ແລະ ຍ້ອງຍໍຄົນປົ່ນຢ່າງເໝາະສົມ. ນອກນີ້, ຄະນະຜູ້ອຳນວຍການຍັງມີຈຳກັດດ້ານທັກສະຄວາມສາມາດຄາດຄະເນ ແລະ ວິເຄາະຄວາມຕ້ອງການຂອງໂຮງຮຽນໄດ້ຢ່າງຖືກຕ້ອງ, ບໍ່ສາມາດເບິ່ງເຫັນສະພາບລວມຂອງໂຮງຮຽນໃນອະນາຄົດ ແລະ ສາມາດວາງແຜນ ເພື່ອຮັບມືກັບສິ່ງທ້າທາຍທີ່ຈະເກີດຂຶ້ນໃນອະນາຄົດຢ່າງຊັດເຈນ.

ສຳລັບຜົນການວິເຄາະຈາກຄຳຖາມຄົ້ນຄວ້າທີ 2 ຄື: ເພື່ອປຽບທຽບທັກສະການຄຸ້ມຄອງທີ່ຈຳແນກຕາມເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກ; ຈາກຜົນການວິເຄາະປຽບທຽບບັນດາທັກສະການຄຸ້ມຄອງດ້ານຕ່າງໆ ໂດຍການຈຳແນກຕາມ 3 ລັກສະນະດັ່ງກ່າວພົບວ່າ: ຜົນການວິເຄາະໄດ້ສະແດງໃຫ້ຢ່າງຊັດເຈນ ແລະ ສອດຄ່ອງກັນລະຫວ່າງ ກຸ່ມຕົວຢ່າງທີ່ມີຕາມເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກຕ່າງກັນ ແມ່ນມີຄວາມຄິດເຫັນບໍ່ແຕກຕ່າງກັນຢ່າງມີໄລຍະສຳຄັນທາງສະຖິຕິ ຢູ່ໃນລະດັບ 0.05 ລວມທັງໝົດ 5 ດ້ານທັກສະການຄຸ້ມຄອງ; ໝາຍຄວາມວ່າ ຄວາມຄິດເຫັນຂອງຜູ້ອຳນວຍການ ແລະ ຄູສອນໃນບັນດາໂຮງຮຽນອະນຸບານສັງກັດລັດ ພາຍໃນແຂວງ ສາລະວັນ ແມ່ນມີຄວາມຄິດເຫັນສອດຄ່ອງກັນໃນທິດທາງດຽວກັນຕໍ່ທັກສະການຄຸ້ມຄອງດ້ານຕ່າງໆ ທາງດ້ານເພດ, ວຸດທິການສຶກສາ ແລະ ປະສົບການເຮັດວຽກທີ່ແຕກຕ່າງກັນໃນລະດັບຄວາມສຳຄັນທາງສະຖິຕິສູງກວ່າ $p > 0.05$.

**9. ຄວາມຮູ້ບຸນຄຸນ**

ກ່ອນອື່ນຜູ້ຄົ້ນຄວ້າຂໍສະແດງຄວາມຮູ້ບຸນຄຸນມາຍັງຄູທີ່ປຶກສາ ທ່ານ ປອ. ສົມໄຊ ເທບສົມບັດ ແລະ ຜູ້ຊ່ວຍຄູທີ່ປຶກສາ ທ່ານ ນ. ລັດດາພອນ ພະໄຊສິດທິເດດ ແລະ ສອນເພັດ ສີສຸລາດ ທີ່ອຸທິດສະຕິປັນຍາ, ຄວາມພະຍາຍາມ ແລະ ເວລາອັນມີຄ່າຊ່ວຍແນະນຳເຮັດໃຫ້ການຂຽນວິທະຍານິພົນຂອງ ຂ້າພະເຈົ້າມີຜົນສຳເລັດສູງ.

ຂໍສະແດງຄວາມຂອບໃຈມາຍັງຄະນະພັກ, ຄະນະນຳ ພ້ອມດ້ວຍຄະນະຮັບຜິດຊອບຫຼັກສູດ ທີ່ຄະນະສຶກສາສາດ, ມະຫາວິທະຍາໄລ ຈຳປາສັກ ທີ່ໄດ້ອຳນວຍຄວາມສະດວກ ແລະ ໃຫ້ໂອກາດຂ້າພະເຈົ້າໄດ້ສຶກສາຮຽນຮູ້ໃນຫຼັກສູດປະລິນຍາໂທ ສຶກສາສາດ ສາຂາວິທະຍາສາດການສຶກສາ. ຕະຫຼອດທ່ານຄະນະກຳມະການປ້ອງກັນວິທະຍານິພົນ ທີ່ໄດ້ເສຍສະຫຼະເຫື່ອແຮງສະຕິປັນຍາ ໃຫ້ຄຳແນະນຳ ແລະ ມີຄຳເຫັນຕໍ່ວິທະຍານິພົນຂອງຂ້າພະເຈົ້າໄດ້ຮັບການປັບປຸງ ແລະ ມີຜົນສຳເລັດສູງ.

ຂໍສະແດງຄວາມຮູ້ບຸນຄຸນມາຍັງຄູ-ອາຈານທີ່ສິດສອນ ທີ່ໄດ້ຖ່າຍທອດຄວາມຮູ້ ແລະ ປະສົບການໃນແຕ່ລະວິຊາ ເຮັດໃຫ້ຂ້າພະເຈົ້າໄດ້ພັດທະນາແນວຄວາມຄິດ ແລະ ຈິນຕະນາການໃໝ່ ເພື່ອນຳເອົາໄປຜັນຂະຫຍາຍພັດທະນາອົງການຈັດຕັ້ງຂ້າພະເຈົ້າໃນອານາຄົດ. ຂໍສະແດງຄວາມຮັກແພງເພື່ອນມິດຮ່ວມຮຸ່ນທີ່ໄດ້ແລກປ່ຽນຮຽນຮູ້ປະສົບການທັງດ້ານວິຊາການ ແລະ ປະສົບການຊີວິດແກ່ຂ້າພະເຈົ້າໄດ້ຮຽນຮູ້ຢ່າງເລິກເຊິ່ງ.

ຂໍຖືໂອກາດນີ້ ສະໄດ້ສະແດງຄວາມຮູ້ບຸນຄຸນມາຍັງອົງການຈັດຕັ້ງຂອງຂ້າພະເຈົ້າ ຄື  ພະແນກສຶກສາທິການ ແລະ ກິລາ ແຂວງຄູສາລະວັນ ທີ່ໄດ້ຊຸກຍູ້ສົ່ງເສີມ ແລະ ໃຫ້ໂອກາດຂ້າພະເຈົ້າໄດ້ຍົກລະດັບວິຊາສະເພາະຂອງຕົນຈົນໄດ້ຮັບຜົນສຳເລັດສູງ.

ສຸດທ້າຍ, ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນມາຍັງຄອບຄົວສາມີ, ລູກ ແລະ ເພື່ອນມິດຮັກແພງທີ່ໃຫ້ກຳລັງໃຈ ແລະ ໃຫ້ການສະໜັບສະໜູນຂ້າພະເຈົ້າສູ້ຊົນ

ສຶກສາຮໍ່າຮຽນຈົບໄດ້ຮັບຜົນສຳເລັດໃນທຸກບາດກ້າວການສຶກສາຮໍ່າຮຽນໃນຕະຫຼອດສອງປີ ສະນັ້ນ, ຖ້າຫາກຂາດພາກສ່ວນ ແລະ ບຸກຄົນທີ່ສຳຄັນດັ່ງກ່າວມາ ຂ້າພະເຈົ້າຄິງຈະບໍ່ຈົບການສຶກສາຄັ້ງນີ້ຢ່າງແນ່ນອນ.

## 10. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ, (2007). ແຜນພັດທະນາຂະແໜງການສຶກສາ 5 ປີ ຄັ້ງທີ IX (2021-2025). ກົດໝາຍການສຶກສາ, ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ, (2020). ແຜນຍຸດທະສາດການພັດທະນາຂະແໜງການສຶກສາແຕ່ປີ 2021-2025.

ກະຊວງສຶກສາ ແລະກິລາ (2016). ກົດໝາຍວ່າດ້ວຍການສຶກສາ)ສະບັບປັບປຸງ .(ພິມທີ່ບໍລິສັດວິສາຫະກິດໂຮງພິມສຶກສາ .ຄັ້ງທີI .SHEP.ໜ້າທີ 10-7.

ກົມພັດທະນາການສຶກາສາ. (2016). ວິໃສທັດຮອດປີ 2030, ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາແລະກິລາ 5 ປີຄັ້ງທີ 8. ນະຄອນຫຼວງວຽງຈັນ :ກະຊວງການສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ, (2008). ການຄຸ້ມຄອງ ແລະ ການພັດທະນາຊຸມຊົນ.

ກະຊວງສຶກສາທິການ ແລະ ກິລາ, (2015). ຫຼັກການຄຸ້ມຄອງ ແລະ ຄຸ້ມຄອງໂຮງຮຽນອະນຸບານສຶກສາ. ກອງເທບ ເຄືອບພານິດຊະກຸນ ແລະ ຄະນະ, (2549). ການລວບລວມລະບຽບທີ່ໃຊ້ໃນການປະຕິບັດວຽກງານທາງລັດຖະການ. ກຸງເທບ, ສຳນັກພິມພູມິທັກ.

ຂະແໜງກ່ອນໄວຮຽນ, ພະແນກສຶກສາທິການ ແລະ ກິລາແຂວງ ສາລະວັນ, (2021). ບົດສະຫຼຸບປະຈຳປີ2021 ຂອງຂະແໜງກ່ອນໄວຮຽນ.

ແຄມເບວ (1972). ການບໍລິຫານໂຮງຮຽນທີ່ມີຜະສິດທິຜົນ. ພິມຄັ້ງທີ 2: ນະຄອນນິວຢ໋ອກ.ອັງກິດ.

ສົມສັກ ຄົງທ່ຽງ, (2019). ຫຼັກການ ແລະ ທິດສະດີການຄຸ້ມຄອງການສຶກສາ, ກຸງເທບມະຫານະຄອນ, ມິດຕະພາບການພິມ ແລະ ສະຕູດີໂອ.

ສຸລິສັກ ປາເຮ, 2000, ຜູ້ອຳນວຍການກັບການສ້າງຄຸນນະພາບໂຮງຮຽນສູ່ຄວາມເປັນເລີດ, ວາລະສານວິຊາການ, ສະບັບທີ 3 ປະຈຳເດືອນຕຸລາ ໜ້າ ທີ 6-12.

ສົມທະນາ ພູມມາ, (2014).ໄດ້ສຶກສາທັກສະການຄຸ້ມຄອງຂອງຜູ້ອຳນວຍການທີ່ມີຜົນກະຕໍ່ການວາງແຜນການກໍ່ສ້າງອາຄານສະຖານທີ່ ສະບັບທີ1, ກຸງເທບມະຫານະຄອນ.

ສຸພາພອນ ບຸນມາກ, (2017).ໄດ້ສຶກສາຄົ້ນຄວ້າກ່ຽວກັບທັກສະການຄຸ້ມຄອງຂອງຜູ້ອຳນວຍການທີ່ມີຄວາມກ່ຽວພັນກັບມາດຕະຖານການຄຸ້ມຄອງແລະການຄຸ້ມຄອງການສຶກສາຂອງສະຖາບັນການສຶກສາ ສັງກັດສຳນັກງານເຂດພື້ນທີ່ກນສຶກສາສຸພັນບູລີພື້ນທີ່2, ສະບັບທີ5, ໂຮງພິມສຸພັນບຸລີ.

ສຸພັນ ສະພາພົງ (2000). ຄວາມຮູ້ເບື້ອງກ່ຽວກັບ ການຄຸ້ມຄອງ. ພິມຄັ້ງທີ2. ມະຫາວິທະຍາໄລຂອນແກ່ນ. ປະເທດໄທ.

ສຸພານີ ກົມກົວ,(2018). ໄດ້ສຶກສາທັກສະການຄຸ້ມຄອງຂອງຜູ້ອຳນວຍການໂຮງຮຽນເອກະຊົນຕາມຄວາມຄິດເຫັນຄູອາຈານທີ່ສັງກັດສຳນັກເຂດພື້ນທີ່ການສຶກສາລະຍອງ. ສະບັບທີ6, ໂຮງພິມລະຍອງເຂດ5, ປະເທດໄທ.

ສູນການສຶກສາຮຽນຮ່ວມ. (2015). ອູປະສັກກີດຂວາງການເຂົ້າຮຽນ, ແລະຍຸດທະວິທີທີ່ເປັນໄປໄດ້ໃນການເພີ່ມແລະການຮັກສາການເຂົ້າຮຽນຂອງນັກຮຽນຊັ້ນມັດທະຍົມ :ໂຄງການພັດທະນາການສຶກສາຂັ້ນພື້ນຖານ.ໜ້າ 35.

ຊານໄຊ ອາຈິນສະມາຈານ, (2022). ການຄຸ້ມຄອງການສຶກສາ, ກຸງເທບມະຫານະຄອນ, ສູນການສົ່ງເສີມກຸງເທບມະຫານະຄອນ.

ນະລິນີ ທະວີສິນ, (2016). ການຄຸ້ມຄອງການສຶກສາໃນສະຕະວັດທີ 21, ກຸງເທບ, ມິດີ ອັບເກລດ.

ນິພົງ ກິນາວົງ, (2015). ຫຼັກການເບື້ອງຕົ້ນກ່ຽວກັບການຄຸ້ມຄອງໂຮງຮຽນ ແລະ ການນິເທດການສຶກສາ, ກຸງເທບມະຫານະຄອນ, ໂຮງພິມພິຂະເນດ.

ນົບພົງ ບຸນຈິດຕຣາດູນ,(1984). ຫຼັກການຄຸ້ມຄອງການສຶກສາ, ກຸງເທບມະຫານະຄອນ, ອານົງການພິມ.

ບຸນຊົມ ສີສະອາດ (2536). ການວິໄຈໃນເບື້ອງຕົ້ນ, ກຸງເທບມະຫານະຄອນ.

ປະຄອງ ແສງຈຳໜ່າຍ ພ້ອມຄະນະ, (2019). ໄດ້ສຶກສາທັກສະການບໍລິຫານວຽກງານຂອງຜູ້ບໍລິຫານໂຮງຮຽນປະຖົມ ສັງກັດສໍານັກງານເຂດພື້ນທີ່ການສຶກສາປະທຸມທານີ. ສະບັບທີ3, ໂຮງພິມປະທຸມທານີ. ປະເທດໄທ.

ວິຈິດ ທີລະກຸນ ແລະ ສຸພິນຍາ ທີລະກຸນ (1980). ທັກສະການບໍລິຫານ ແລະ ການຄຸ້ມຄອງອົງກອນ. ພິມຄັ້ງທີ3: ນະຄອນພະນົມ. ປະເທດໄທ.

ທະນາຄານໂລກ,( 2008). ສິ່ງທ້າທາຍ ແລະ ແຜນພັດທະນາຂະແໜງສຶກສາ ສປປ.ລາວ.ສະບັບທີ 2. ນະຄອນຫຼວງວຽງຈັນ. ສະຖາບັນຄົ້ນຄວ້າວິທະຍາສາດແຫ່ງຊາດ.

ພະຄູສັງຄະລັກ ໄຊຍະລັດ, (2015). ວາລະສານມະຫາວິທະຍາໄລມົງກຸດລາດສະກຸມານວິທະຍາໄລ, ວິທະຍາເຂດຮ້ອຍເອັດ, ປີທີ 4, ສະບັບທີ 2 ປະຈໍາເດືອນກໍລະກົດ-ເດືອນທັນວາ 2015.

ພາວິດາ ທາລາສີສຸດ ແລະ ວິບູນໂຕວະນະບຸດ, (1999).ຫຼັກການ ແລະ ທິດສະດີໃນການຄຸ້ມຄອງການສຶກສາ ກຸງເທບມະຫານະຄອນ, ສໍານັກພິມມະຫາວິທະຍາໄລລາມຄໍາແຫງ.

ພະຍອມ ວົງສາສີ, (2001). ການຄຸ້ມຄອງງານຂອງບຸກຄົນ, ພິມຄັ້ງທີ 4, ກຸງເທບມະຫານະຄອນ, ພິດຈະນານຸກົມການພິມ.

ທີລະ ລຸນຈະເລີນ, (2003). ການຄຸ້ມຄອງໂຮງຮຽນໃນຍຸກແຫ່ງການປະຕິຮູບການສຶກສາ, ກຸງເທບມະຫານະຄອນ, ບໍລິສັດສໍານັກພິມເຂົ້າຝ່າງຈໍາກັດ.

ທິດສະໜາ ເຂມມະນີ ແລະ ຄະນະ ( 2017: 22-42). ຄວາມສາມາດຂອງການບໍລິຫານໂຮງຮຽນມັດທະຍົມ. ກຸງເທບມະຫານະຄອນ. ປະເທດໄທ.

ອັລຟອງໂຊ (1981: 334-33). ຍຸດທະສາດການບໍລິຫານການອົງກອນ. ພິມຄັ້ງທີ1.

ມະຫາວິທະຍາໄລ ກຣິຟິດ. ປະເທດອອສເຕເລຍ.

Beaton GALAFA, (2018). Management Skills at school Effectiveness. Toronto University. Canada.

Bamard Chester (1962). The Correlation between administrative skills and school effectiveness. University of Malaysia. Malaysia.

Courtiand L. Bovee and others, (1993). Management (New York: McGraw-Hill Inc.)

Drucker, Peter F. (1981). Management Tasks, Responsibilities and Practices, Allied Publishers Private Limited: New Delhi.

Fullan, M. (2005).Leadership & sustainability. Thousamd Oaks: Corwin Press.

Katz R.L. (1974) Skills of an Effective Administrator, Harvard Business Review, 52(5)

90-102.

Nunnally. J.C.(1978). Psychometric Theory. New Jork. McGraw-Hill.

Lee J. Cronbach, (1974). Essentials of Psychological Testing, 3rd ed. (NewYork: Harper & Row Publishers).

Michael Olarewaju O., (2015). Principals' Administrative Skills for Secondary Schools in Plateau State, Nigeria. Asia Pacific Journal of Education, Arts and Sciences, Vol. 2 No. 1.

Nurfara Syakila B.S. K., (2019). The Challenges of School Administrators in Teaching

and Learning Process for Malay Literacy Subject in Primary School. *Advances in Social Science, Education and Humanities Research, volume 400.*

Okoye, J.N. (2007). Apprisal of principles administrative skills of supervision in secondary schools in Anambra State. Unpublished Ph.D Dissertation, Faculty of Education, Nnamdi Azikwe University, Awka.

Suruga, P. O. (2014). Obstacles to Basic Education Development in Rural Lao PDR - Delayed Enrolment, Grade Repetition and Dropout - . Education Development, Gender, Ethnics, Lao PDR JEL Classification: I20, O15, P20 , 35.

Saud Fahad Khreisha, (2016). The problems of educational administration in secondary schools in Jordan from the perspective of schools' principals and its relationship with some variables. Global Journal of Educational Foundation; ISSN: 2449-061X Vol. 4 (8), pp. 321-332.

Simon A Herbert (1950). The skills Needs of Managers to Lead schools Effectiveness.

University of Porto. Portugal.

SergioVanni (1981). Managerial Skills Needs by Principals. University of Brunei.

Saud Fahad Khreisha,(2016). Management and Admiration Skills Needs for Principals.

University of SIAN Malaysia.

Thelbert L. Drake &William H. Roe, (1986). The Principalship, 3rd ed. (New York: Macmillan).

Thomas J. Sergiovanni, (1980). Educational Administration. (Englewood Cliffs, N.J.: Prentice-Hall, Inc.).

R. Katz (1955) "Skills of an Effective Administrator", Harvard Business Review, P.33-42 and R. Katz, "Retrospective Commentary".

Drek and Rol (1986:29). Management Skills and Strategies. Cambridge University.

Robert L. Katz (1955: 22-42). Management knowledge and skills. 3rd edition.

Robert J. Alfonso and others (1981:334-338). Management Capacity and Leading schools. Boston University.

UNICEP. (2011). SCHOOLS OF QUALITY: A Case Study on Rights-Based Education Reform in The Lao People's Democratic Republic.Vientianecapital: EducationSectionPrograme Division.

Wiles (1995:125). Administrative Skills. Cambridge University. 2nd Edition